ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------000---------

ກະຊວງໂຍທາທິການ ແລະ ຂົນສົ່ງ — ເລກທີ 00177 /ຍທຂ

ນະຄອນຫຼວງ ວຽງຈັນ, ວັນທີ 4 ມັງກອນ 2013

# ຂໍ້ຕົກລົງ
# ວ່າດ້ວຍລະບຽບການກ່ຽວກັບການຂຶ້ນທະບຽນເຮືອ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ373/ນຍ, ລົງວັນທີ22 ຕຸລາ 2007 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ກະຊວງໂຍທາທິການ ແລະ ຂົນສົ່ງ;
- ອີງຕາມໜັງສືສະເໜີຂອງກົມໂຍທາທິການທາງນ້ຳສະບັບເລກທີ19936/ກຍນ, ລົງວັນທີ10/12/2012;
- ອີງຕາມການເຫັນດີເປັນເອກະພາບຂອງຄະນະນຳ ກະຊວງໂຍທາທິການ ແລະ ຂົນສົ່ງ.

**ລັດຖະມົນຕີວ່າການກະຊວງໂຍທາທິການ ແລະ ຂົນສົ່ງ ຕົກລົງອອກລະບຽບການ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ວາງອອກເພື່ອກຳນົດລະບຽບການ ກ່ຽວກັບການຂຶ້ນທະບຽນເຮືອ ທີ່ນຳໃຊ້ຢູ່ ສປປ ລາວ ແນໃສ່ເຮັດໃຫ້ການຄຸ້ມຄອງເຮືອທຸກຊະນິດມີຄວາມສະດວກ, ເປັນລະບຽບຮຽບຮ້ອຍ ແລະ ເປັນລະບົບເອກະພາບໃນຂອບເຂດທົ່ວປະເທດ.

### ມາດຕາ 2. ເຮືອ

ເຮືອແມ່ນຍານພາຫະນະທາງນ້ຳທຸກຊະນິດ ສ້າງດ້ວຍໂລຫະ, ໄມ້ ຫລື ວັດສະດຸອື່ນ ທີ່ຂັບເຄື່ອນດ້ວຍເຄື່ອງຈັກ, ດ້ວຍການພາຍ, ການແຈວ, ການຖໍ່ດ້ວຍຄົນ ຫລື ດ້ວຍວິທີການອື່ນສຳລັບນຳໃຊ້ເຂົ້າໃນຈຸດປະສົງຕ່າງໆເຊັ່ນ: ການຂົນສົ່ງ, ການກໍ່ສ້າງ, ການຂຸດຄົ້ນຊັບພະຍາກອນ,ການຫຼິ້ນກິລາ, ການພັກຜ່ອນ, ການທ່ອງທ່ຽວ, ການປະມົງ ແລະ ກິດຈະການທາງນ້ຳອື່ນໆ.

### ມາດຕາ 3. ຄວາມໝາຍຂອງຄຳສັບ

ຄຳສັບຕ່າງໆຢູ່ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. ເລກທະບຽນເຮືອ ໝາຍເຖິງເລກລຳດັບຂອງເຮືອທີ່ໄດ້ຮັບການຈົດເຂົ້າໃນປຶ້ມບັນທຶກການຂຶ້ນທະບຽນເຮືອ;

2. ເຮືອແພ ໝາຍເຖິງ ພາຫະນະທີ່ບໍ່ມີເຄື່ອງຈັກ ສຳລັບບັນທຸກວັດຖຸສິ່ງຂອງລອຍເຖິງອູ່ລອຍ, ແພຫຼຸບເຮືອ ແລະ ຮ້ານອາຫານຟູນ້ຳ;
3. ອູ່ຕໍ່ເຮືອ ໝາຍເຖິງ ໂຮງງານ ຫລື ສະຖານທີ່ຕໍ່ເຮືອ ຫລື ສ້ອມແປງເຮືອ;
4. ແຮງມ້າ ໝາຍເຖິງຫົວໜ່ວຍກຳລັງແຮງຂອງເຄື່ອງຈັກເຮືອ ຕາມມາດຕະຖານຂອງໂຮງງານທີ່ຜະລິດ;
5. ຊື່ເຮືອ ໝາຍເຖິງ ຊື່ສະເພາະຂອງເຮືອ ຕາມການຕັ້ງຊື່ຂອງເຈົ້າຂອງເຮືອ;
6. ການຕໍ່ເຮືອ ໝາຍເຖິງ ການສ້າງເຮືອ ;
7. ການປະມົງ ໝາຍເຖິງ ການຫາ, ການຈັບ ຫລື ການລ້ຽງປາ ແລະ ສັດນ້ຳອື່ນ.

## ມາດຕາ 4. ຫຼັກການລວມການຂຶ້ນທະບຽນເຮືອ

ການຂຶ້ນທະບຽນເຮືອຕ້ອງປະຕິບັດຕາມຫຼັກການລວມດັ່ງນີ້:

1. ຮັບປະກັນຄວາມເປັນເອກະພາບກັນ ໃນການຈັດຕັ້ງປະຕິບັດ ໃນຂອບເຂດທົ່ວປະເທດ;
2. ຮັບປະກັນຄວາມສະດວກ ແລະ ວ່ອງໄວ;
3. ຮັບປະກັນຄວາມຖືກຕ້ອງຕາມມາດຖານເຕັກນິກ;
4. ຮັບປະກັນຄວາມຖືກຕ້ອງຕາມລະບຽບກົດໝາຍ.

## ມາດຕາ 5. ຂອບເຂດການນຳໃຊ້ລະບຽບການ

ລະບຽບການສະບັບນີ້ນຳໃຊ້ສຳລັບການຂຶ້ນທະບຽນເຮືອ ທີ່ນຳໃຊ້ຢູ່ຕາມແມ່ນ້ຳ, ລຳເຊ, ຫ້ວຍ, ຮ່ອງ, ຄອງ, ບຶງ ແລະ ອ່າງເກັບນ້ຳຕ່າງໆ ຢູ່ ສປປ ລາວ. ຍົກເວັ້ນເຮືອແພ,ເຮືອທີ່ບໍ່ຕິດເຄື່ອງຈັກ ແລະ ເຮືອກິລາ.

ລະບຽບການສະບັບນີ້ບໍ່ນຳໃຊ້ກັບເຮືອທີ່ຮັບໃຊ້ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ

# ໝວດທີ 2
# ການຂຶ້ນທະບຽນເຮືອ,ການຕັ້ງຊື່ ແລະ ການລຶບລ້າງທະບຽນເຮືອ

## ມາດຕາ 6. ເງື່ອນໄຂຂອງການຂຶ້ນທະບຽນ

ການຂຶ້ນທະບຽນເຮືອ ຢູ່ ສປປ ລາວ ຕ້ອງປະຕິບັດຕາມເງື່ອນໄຂດັ່ງນີ້:

1. ຜູ້ທີ່ມີຈຸດປະສົງ ຂໍຂຶ້ນທະບຽນເຮືອ ຕ້ອງເປັນເຈົ້າຂອງເຮືອ ຊຶ່ງອາດແມ່ນບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງໃດໜຶ່ງດັ່ງລຸ່ມນີ້:
    - ພົນລະເມືອງລາວ ;
    - ຊາວຕ່າງດ້າວ, ຄົນຕ່າງປະເທດ, ຜູ້ບໍ່ມີສັນຊາດ ທີ່ດຳເນີນທຸລະກິດ ຫລື ມີທີ່ຢູ່ຖາວອນໃນ ສປປ ລາວ;
    - ອົງການຈັດຕັ້ງຂອງລັດ, ເອກະຊົນລາວ;
    - ອົງການຈັດຕັ້ງ ສາກົນ, ສະຖານທູດ ທີ່ມີສຳນັກງານຕັ້ງຢູ່ ສປປ ລາວ.

2. ເຈົ້າຂອງເຮືອຕ້ອງມີເອກະສານກ່ຽວກັບເຮືອດັ່ງນີ້:
    - ໜັງສືຢັ້ງຢືນຄວາມເປັນກຳມະສິດຂອງເຮືອ ຫລື ໜັງສືຢັ້ງຢືນສິດນຳໃຊ້ເຮືອທີ່ຖືກຕ້ອງ ແລະ ບໍ່ຂັດກັບລະບຽບກົດໝາຍຂອງລາວ;

- ໜັງສືຢັ້ງຢືນການຍົກເລີກທະບຽນເກົ່າ ທີ່ອົງການຄຸ້ມຄອງທະບຽນເຮືອ ຢູ່ພາຍໃນ ຫລື ຕ່າງປະເທດອອກໃຫ້ໃນເມື່ອກ່ອນ. ຫາກແມ່ນເຮືອທີ່ນຳເຂົ້າມາຈາກຕ່າງປະເທດ, ອາຍຸການນຳໃຊ້ຜ່ານມາບໍ່ໃຫ້ເກີນ 10 ປີມີໜັງສືນຳເຂົ້າຖືກຕ້ອງ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ, ຍັງມີສະພາບດີ ແລະ ມີໃບຢັ້ງຢືນການກວດກາເຕັກນິກ ທີ່ໜ່ວຍງານກວດກາເຕັກນິກເຮືອອອກໃຫ້.

## ມາດຕາ 7. ເອກະສານປະກອບການຂໍຂຶ້ນທະບຽນ

ເອກະສານປະກອບການຂໍຂຶ້ນທະບຽນເຮືອມີດັ່ງນີ້:

1. ໃບຄຳຮ້ອງຂໍຂຶ້ນທະບຽນເຮືອ;
2. ໃບຢັ້ງຢືນທີ່ຢູ່ຈາກອຳນາດການປົກຄອງບ້ານອາຍຸບໍ່ເກີນ03ເດືອນ;
3. ສຳເນົາບັດປະຈຳຕົວ ສຳລັບພົນລະເມືອງລາວ, ຊາວຕ່າງດ້າວ ແລະ ຜູ້ບໍ່ມີຊາດ ຫລືໜັງສືຜ່ານແດນສຳລັບຄົນຕ່າງປະເທດ, ສຳເນົາໃບທະບຽນວິສາຫະກິດ ສຳລັບນິຕິບຸກຄົນ;
4. ໃບຢັ້ງຢືນການກວດກາເຕັກນິກເຮືອ;
5. ໃບອະນຸຍາດນຳເຂົ້າ, ໃບນຳສົ່ງສິນຄ້າ ແລະ ໃບຮັບເງິນຄ່າເຮືອ;
6. ໃບຢັ້ງຢືນການເສຍພາສີ ຫລື ຍົກເວັ້ນພາສີ ກໍລະນີການນຳເອົາເຮືອເຂົ້າມາຈາກຕ່າງປະເທດ;
7. ໃບຍົກເລີກທະບຽນເຮືອ ທີ່ອົງການຄຸ້ມຄອງທະບຽນເຮືອຂອງຕ່າງປະເທດອອກໃຫ້ ກໍລະນີເຮືອເຄີຍໄດ້ຂຶ້ນທະບຽນຢູ່ຕ່າງປະເທດ;
8. ໃບຢັ້ງຢືນທີ່ກ່ຽວຂ້ອງ ເຖິງກຳມະສິດຂອງເຮືອໃນປະຈຸບັນ:
   - ໃບຢັ້ງຢືນການຕໍ່ເຮືອ ແລະ ສຳເນົາໃບທະບຽນວິສາຫະກິດ ຂອງ ອູ່ຕໍ່ເຮືອກໍລະນີຈ້າງອູ່ຕໍ່ເຮືອສ້າງໃຫ້;
   - ໃບຢັ້ງຢືນການສ້າງເຮືອ ແລະ ສຳເນົາສຳມະໂນຄົວ ຂອງຜູ້ຕໍ່ເຮືອ ກໍລະນີຈ້າງບຸກຄົນຕໍ່ໃຫ້;
   - ສັນຍາຊື້-ຂາຍ ຫລື ໃບໂອນກຳມະສິດເຮືອ ກໍລະນີຫາກມີການຊື້-ຂາຍ;
9. ໃບຢັ້ງຢືນຄວາມປອດໄພທາງດ້ານເຕັກນິກ ແລະ ສິ່ງແວດລ້ອມຂອງເຮືອ;
10. ຮູບຖ່າຍດ້ານຂ້າງຂວາ ເຕັມລຳ ຕາມລວງຍາວຂອງເຮືອ ໃນສະພາບລອຍຕົວ ຂະໜາດ 10x15 ຊັງຕີແມັດ.

## ມາດຕາ 8. ຂັ້ນຕອນຂອງການຂຶ້ນທະບຽນ

ການຂຶ້ນທະບຽນເຮືອ ແມ່ນດຳເນີນຕາມຂັ້ນຕອນດັ່ງນີ້:

1. ເຈົ້າຂອງເຮືອ ຍື່ນໃບຄຳຮ້ອງ ຂໍຂຶ້ນທະບຽນເຮືອຕາມ ແບບພິມ ກ ຂອງ ກົມໂຍທາທິການທາງນ້ຳ ພ້ອມເອກະສານປະກອບການຂຶ້ນທະບຽນຕາມ ມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ຕໍ່ອົງການຄຸ້ມຄອງທະບຽນເຮືອທີ່ກ່ຽວຂ້ອງ;
2. ອົງການຄຸ້ມຄອງທະບຽນເຮືອຮັບຄຳຮ້ອງພ້ອມດ້ວຍເອກະສານປະກອບແລ້ວຕ້ອງດຳເນີນການດັ່ງນີ້:
   - ກວດກາເອກະສານປະກອບຄຳຮ້ອງ ຂໍຂຶ້ນທະບຽນເຮືອຢ່າງລະອຽດ ຫາກເຫັນວ່າເອກະສານຍັງບໍ່ຄົບຖ້ວນ ຫລື ມີຄວາມບົກຜ່ອງ ຕ້ອງແຈ້ງໃຫ້ເຈົ້າຂອງເຮືອ ຊາບຢ່າງຊ້າບໍ່ໃຫ້ເກີນ 07 ວັນລັດຖະການນັບແຕ່ວັນໄດ້ຮັບຄຳຮ້ອງເປັນຕົ້ນໄປ ເພື່ອແກ້ໄຂໃຫ້ສົມບູນ;

- ເມື່ອເຫັນວ່າເອກະສານຄົບຖ້ວນແລ້ວ, ກໍລົງກວດກາສະພາບຕົວຈິງ ຂອງເຮືອ, ຫາກເຫັນວ່າສະພາບ ຕົວຈິງຂອງເຮືອ ບໍ່ກົງກັບຂໍ້ມູນທີ່ໄດ້ແຈ້ງຢູ່ໃນເອກະສານທີ່ກຳນົດຢູ່ໃນມາດຕາ 7, ຂໍ້ທີ 3, 8 ແລະ 9 ຂອງ ຂໍ້ຕົກລົງສະບັບນີ້ ກໍຕ້ອງແຈ້ງໃຫ້ເຈົ້າຂອງເຮືອ ແກ້ໄຂ ຫລື ປັບປຸງສະພາບຂອງເຮືອໃຫ້ຖືກຕ້ອງ ກັບຂໍ້ມູນທີ່ແຈ້ງຢູ່ໃນເອກະສານດັ່ງກ່າວ, ເມື່ອໄດ້ແກ້ໄຂ ຫລື ປັບປຸງສຳເລັດແລ້ວກໍແຈ້ງໃຫ້ອົງການຄຸ້ມຄອງທະບຽນເຮືອລົງກວດກາຕື່ມອີກ. ຫາກເຫັນວ່າສະພາບຂອງເຮືອ ຖືກຕ້ອງ ກັບຂໍ້ມູນດັ່ງກ່າວນັ້ນແລ້ວ, ອົງການຄຸ້ມຄອງທະບຽນເຮືອ ກໍກຳນົດເລກທະບຽນ ໃຫ້ແກ່ເຮືອ ລຳນັ້ນ ແລະ ຈົດເຂົ້າໃນປຶ້ມບັນທຶກການຂຶ້ນທະບຽນເຮືອ ຕາມແບບພິມກ1, ຫຼັງຈາກນັ້ນ ກໍອອກໃບທະບຽນເຮືອ ໃຫ້ເຈົ້າຂອງເຮືອຢ່າງຊ້າບໍ່ເກີນ 10 ວັນລັດຖະການ ນັບແຕ່ວັນທີ່ໄດ້ຜ່ານການກວດກາ ສະພາບຕົວຈິງຂອງເຮືອ.

**ມາດຕາ 9. ເນື້ອໃນປຶ້ມບັນທຶກການຂຶ້ນທະບຽນເຮືອ.**

ປຶ້ມບັນທຶກການຂຶ້ນທະບຽນເຮືອ ມີເນື້ອໃນພື້ນຖານດັ່ງນີ້:

1. ເລກລຳດັບ, ໝາຍເລກທະບຽນ;
2. ຊື່ເຮືອ ແລະ ວັນເວລາຂຶ້ນທະບຽນ;
3. ຊື່ ແລະ ທີ່ຢູ່ເຈົ້າຂອງເຮືອ;
4. ຊັ້ນຂອງເຮືອ, ຂອບເຂດ ແລະ ປະເພດການນຳໃຊ້,
5. ວັນເວລາ ຕໍ່ເຮືອ;
6. ລວງຍາວ;
7. ລວງກວ້າງ;
8. ລວງເລິກ;
9. ວັດສະດຸເປືອກເຮືອ;
10. ຈຳນວນ, ຍີ່ຫໍ້, ຂະໜາດຄວາມແຮງ ຂອງເຄື່ອງຈັກຫຼັກ;
11. ຂະໜາດບັນຈຸ ຫລື ບັນທຸກຂອງເຮືອ, ແຮງດຶງ/ຍູ້;
12. ລະດັບກິນນ້ຳເລິກ.

**ມາດຕາ 10. ທະບຽນເຮືອ.**

ທະບຽນເຮືອລວມມີ **2** ສ່ວນຄື: ສ່ວນທີ່ເປັນຕົວເລກ ແລະ ສ່ວນຕົວອັກສອນດັ່ງນີ້:

1. ສ່ວນທີ່ເປັນຕົວຕົວອັກສອນ ແມ່ນອັກສອນຫຍໍ້ຂອງກະຊວງ, ແຂວງ ຫລື ນະຄອນຫຼວງ, ເມືອງ ຕາມທີ່ກຳນົດໄວ້ໃນ ເອກະສານແນບທ້າຍ1ຂອງ ຂໍ້ຕົກລົງສະບັບນີ້.
2. ສ່ວນທີ່ເປັນຕົວເລກ ແມ່ນເປັນ ຕົວເລກ **4** ຕົວ ທີ່ນັບແຕ່ໝາຍເລກ **0001** ເຖິງ **9999**. ຂະໜາດຂອງຕົວອັກສອນ ແລະ ຕົວເລກ ທີ່ແຕ້ມເທິງເຮືອຕ້ອງສົມສ່ວນກັບຂະໜາດຂອງເຮືອ ຊຶ່ງໄດ້ກຳນົດດັ່ງນີ້:

| | | |
|---|---|---|
| - ລວງສູງຢ່າງໜ້ອຍ | = | **200** ມມ; |
| - ລວງກວ້າງຢ່າງໜ້ອຍ | = | **30** ມມ; |
| - ໄລຍະຫ່າງ ລະຫວ່າງ ຕົວໜັງສື ຫລື ຕົວເລກ | = | **30** ມມ. |

ມາດຕາ 11. ໃບທະບຽນເຮືອ.

ໃບທະບຽນເຮືອ ແມ່ນໜັງສືຢັ້ງຢືນການຂຶ້ນທະບຽນເຮືອ ທີ່ໄດ້ລະບຸ ລາຍລະອຽດຕ່າງໆ ເປັນຕົ້ນ ແມ່ນຊື່ເຈົ້າຂອງ, ປະເພດ, ເລກທະບຽນ, ວັນ ແລະ ສະຖານທີ່ອອກໃບທະບຽນເຮືອ ຊຶ່ງ ອົງການຄຸ້ມຄອງທະບຽນເຮືອອອກໃຫ້ເຈົ້າຂອງເຮືອຕາມ ແບບພິມ ຂ ຂອງ ກົມໂຍທາ ທິການທາງນ້ຳ ເພື່ອໃຊ້ເປັນຫຼັກຖານ ກ່ຽວກັບສິດຄອບຄອງ ແລະການນຳໃຊ້ເຮືອຢ່າງ ຖືກຕ້ອງຕາມລະບຽບກົດໝາຍ.

ມາດຕາ 12. ການແຕ້ມເລກທະບຽນໃສ່ເຮືອ

ເມື່ອໄດ້ຮັບໃບທະບຽນແລ້ວ, ເຈົ້າຂອງເຮືອ ຕ້ອງແຕ້ມເລກທະບຽນທັງຕົວອັກສອນ ແລະ ຕົວເລກໃສ່ເຮືອ ໂດຍໃຊ້ສີທີ່ແຕກຕ່າງ ຈາກສີຂອງຕົວເຮືອຄື ຫາກສີ ຕົວເຮືອເປັນສີເຂັ້ມ, ສີຂອງຕົວ ອັກສອນ ແລະ ຕົວເລກຕ້ອງເປັນສີອ່ອນ ຫລື ຫາກສີຂອງຕົວເຮືອເປັນສີອ່ອນ ສີຂອງຕົວອັກສອນ ແລະ ຕົວເລກ ຕ້ອງເປັນສີເຂັ້ມ ແລະ ໃຫ້ປະຕິບັດດັ່ງນີ້:

1. ແຕ້ມໃສ່ຫ້ອງຂັບຂອງເຮືອ ບ່ອນທີ່ບໍ່ຖືກປິດບັງຢູ່ດ້ານຊ້າຍ, ດ້ານຂວາ ແລະ ດ້ານໜ້າ;
2. ແຕ້ມໃສ່ບໍລິເວນຂອບເຮືອທັງສອງຂ້າງ ໃນກໍລະນີເຮືອບໍ່ມີຫ້ອງຂັບ;
3. ແຕ້ມໃສ່ບ່ອນທີ່ເຫັນໄດ້ງ່າຍ ໂດຍຫຍໍ້ຂະໜາດ ຂອງຕົວອັກສອນ ແລະຕົວເລກ ໃຫ້ເໝາະສົມໃນກໍລະນີທີ່ເຮືອບໍ່ມີຫ້ອງຂັບ ຫລື ບໍລິເວນຂອບເຮືອ ບໍ່ມີເນື້ອທີ່ພຽງພໍ ທີ່ຈະແຕ້ມເລກທະບຽນເຮືອໃສ່ໄດ້ ຕາມມຂະໜາດທີ່ໄດ້ກຳນົດໄວ້ໃນ ມາດຕາ **10** ຂ້າງເທິງນີ້;
4. ແຕ້ມຕົວເລກຈຳນວນຜູ້ໂດຍສານຢູ່ເທິງ ໝາຍເລກທະບຽນ ໃນກໍລະນີທີ່ໄດ້ຮັບ ອະນຸຍາດ ຂົນສົ່ງແຕ່**12** ຄົນຂຶ້ນໄປ.

ມາດຕາ 13. ສັນຊາດຂອງເຮືອ

ເຮືອທີ່ໄດ້ຮັບການຂຶ້ນທະບຽນ ໂດຍອົງການຂຶ້ນທະບຽນຂັ້ນຕ່າງໆ ຢູ່ ສປປ ລາວ ແລ້ວກໍໄດ້ຮັບສະຖານະເປັນເຮືອສັນຊາດລາວ ເຈົ້າຂອງເຮືອສາມາດເອົາທຸງຊາດລາວ ຂຶ້ນຕິດໃສ່ເຮືອ ຂອງຕົນໄດ້.

ມາດຕາ 14: ຊື່ເຮືອ.

ເຮືອຂົນສົ່ງຜູ້ໂດຍສານ ທີ່ມີຂະໜາດບັນຈຸແຕ່ **15** ບ່ອນນັ່ງຂຶ້ນໄປ ແລະ ເຮືອຂົນສົ່ງສິນຄ້າ ທີ່ມີຂະໜາດບັນທຸກແຕ່ **5** ໂຕນຂຶ້ນ ໄປຕ້ອງມີຊື່ສະເພາະຕາມເຈົ້າຂອງເຮືອຕັ້ງໃຫ້ ໂດຍ ໄດ້ຮັບຄວາມເຫັນດີ ແລະ ຮັບຮອງໂດຍອົງການຄຸ້ມຄອງທະບຽນເຮືອທີ່ອອກທະບຽນໃຫ້.

ການຕັ້ງຊື່ ແລະ ແຕ້ມຊື່ໃສ່ເຮືອ, ໃຫ້ເຈົ້າຂອງເຮືອ ປະຕິບັດດັ່ງນີ້ :

1. ຊື່ເຮືອ ທີ່ຕັ້ງຂຶ້ນໃໝ່ ຕ້ອງບໍ່ໃຫ້ກົງກັບຊື່ເຮືອລຳອື່ນ ທີ່ໄດ້ຂຶ້ນທະບຽນ ແລະໄດ້ຈົດ ເຂົ້າປຶ້ມບັນທຶກທະບຽນເຮືອແລ້ວ ;
2. ຖ້າຢາກຕັ້ງຊື່ເຮືອ ຕາມຊື່ວິລະບຸລຸດຂອງຊາດ, ຊື່ເຫດການ ຫລື ຊື່ສະຖານທີ່ຕ່າງໆ ທາງປະຫວັດສາດ ຕ້ອງໄດ້ຮັບອະນຸຍາດຈາກກະຊວງທີ່ກ່ຽວຂ້ອງສາກ່ອນ;
3. ຊື່ເຮືອ ທີ່ໄດ້ຮັບການເຫັນດີແລ້ວ ຕ້ອງໄດ້ແຕ້ມໃສ່ດ້ານນອກ ທັງສອງຂ້າງຂອງຫົວ ເຮືອ ຢູ່ບ່ອນທີ່ສາມາດແນມເຫັນໄດ້ຈະແຈ້ງ.ຖ້າແມ່ນເຮືອ ທີ່ແລ່ນສາຍຕ່າງປະເທດ

ຊື່ເຮືອຕ້ອງໃຫ້ແຕ້ມເປັນພາສາລາວ ແລະ ພາສາອັງກິດ, ສີຂອງຕົວອັກສອນຊື່ເຮືອຕ້ອງແຕກຕ່າງ ກັບສີຕົວເຮືອ. ຂະໜາດຂອງຕົວອັກສອນໃຫ້ປະຕິບັດຕາມທີ່ໄດ້ກໍານົດໄວ້ໃນມາດຕາ **12** ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 15. ການປ່ຽນຊື່ເຮືອ.**

ຊື່ເຮືອທີ່ໄດ້ຂຶ້ນທະບຽນແລ້ວ ບໍ່ສາມາດປ່ຽນແປງໄດ້ໂດຍລໍາພັງ, ການປ່ຽນແປງຊື່ເຮືອຕ້ອງໄດ້ຮັບອະນຸຍາດ ຈາກອົງການຄຸ້ມຄອງທະບຽນເຮືອ ບ່ອນທີ່ເຮືອໄດ້ຮັບການຈົດທະບຽນ ຊຶ່ງມີຂັ້ນຕອນ ໃນການປະຕິບັດດັ່ງນີ້:

1. ເຈົ້າຂອງເຮືອຕ້ອງຂຽນໃບຄໍາຮ້ອງ ພ້ອມທັງແຈ້ງເຫດຜົນ ໃນການຂໍປ່ຽນຊື່ເຮືອຕາມແບບພິມຄ ຂອງ ກົມໂຍທາທິການທາງນໍ້າ ແລ້ວ ຍື່ນໃບຄໍາຮ້ອງພ້ອມດ້ວຍສໍາເນົາໃບທະບຽນເຮືອ ຕໍ່ອົງການຄຸ້ມຄອງ ທະບຽນເຮືອທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າພິຈາລະນາ;
2. ເຈົ້າໜ້າທີ່ງ ມີສິດອໍານາດ ກ່ຽວຂ້ອງ ຂອງອົງການຄຸ້ມຄອງການຂຶ້ນທະບຽນເຮືອຈະຄົ້ນຄວ້າພິຈາລະນາຕາມຄໍາຮ້ອງດັ່ງກ່າວ. ຫາກພິຈາລະນາເຫັນວ່າ ມີເຫດຜົນເໝາະສົມ, ກໍຈະອອກໃບທະບຽນເຮືອໃໝ່ຕາມຊື່ໃໝ່, ແຕ່ຍັງຮັກສາເລກທະບຽນເກົ່າພ້ອມທັງດັດແກ້ຊື່ເຮືອໃນປຶ້ມບັນທຶກການຂຶ້ນທະບຽນເຮືອ, ແລ້ວແຈ້ງໃຫ້ເຈົ້າຂອງເຮືອດັດແກ້ຊື່ຢູ່ລໍາເຮືອ ແລະ ນໍາເອົາເຮືອໄປກວດກາເຕັກນິກ. ເມື່ອຜ່ານການກວດກາເຕັກນິກ ຢ່າງຖືກຕ້ອງແລ້ວ,ອົງການຄຸ້ມຄອງທະບຽນເຮືອທີ່ກ່ຽວຂ້ອງຈຶ່ງມອບໃບທະບຽນເຮືອໃໝ່ໃຫ້ເຈົ້າຂອງເຮືອ ແລະ ເກັບໃບທະບຽນເຮືອເກົ່າຄືນ ;
3. ເຮືອທີ່ໄດ້ຮັບການປ່ຽນຊື່ແລ້ວ ຈະຕ້ອງໄດ້ດັດແກ້ຊື່ຢູ່ໃນປຶ້ມບັນທຶກທະບຽນເຮືອແຫ່ງຊາດ ຫຼັງຈາກປ່ຽນຊື່ເຮືອ ທີ່ຢູ່ໃນການຄຸ້ມຄອງ ຂອງພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ນະຄອນຫຼວງ ແລະ ຂອງຫ້ອງການກະຊວງໂຍທາທິການ ແລະ ຂົນສົ່ງເມືອງ, ເທດສະບານ ແລ້ວ ພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ນະຄອນຫລວງ ຕ້ອງລາຍງານໃຫ້ກົມໂຍທາທິການທາງນໍ້າເພື່ອຊາບ ແລະ ດັດແກ້ຊື່ເຮືອໃນປຶ້ມບັນທຶກ ທະບຽນເຮືອແຫ່ງຊາດ.

**ມາດຕາ 16. ການລຶບລ້າງທະບຽນເຮືອ.**

ທະບຽນເຮືອລໍາໃດໜຶ່ງ ຈະຖືກລຶບລ້າງ ອອກຈາກ ປຶ້ມບັນທຶກ ການຂຶ້ນທະບຽນເຮືອ ໃນກໍລະນີ ທີ່ເຮືອຢູ່ໃນສະພາບດັ່ງນີ້:

1. ສູນຫາຍ, ຫຼົ້ມຈົມ, ຖືກໄຟໄໝ້, ປະສົບອຸບັດຕິເຫດ, ເປ່ເພພັກ, ບໍ່ສາມາດກອບກູ້, ສ້ອມແປງຫລື ຟື້ນຟູຄືນໄດ້;
2. ໝົດອາຍຸການນໍາໃຊ້, ເສື່ອມຄຸນນະພາບ, ສູນເສຍຄຸນລັກສະນະ ຫລື ມາດຕະຖານເຕັກນິກຂອງເຮືອ ຕາມທີ່ກໍານົດໄວ້ ໃນລະບຽບການທີ່ຍັງມີຜົນບັງຄັບໃຊ້ໃນປະຈຸບັນ;
3. ຍົກຍ້າຍໄປຂຶ້ນທະບຽນ ຢູ່ຕ່າງປະເທດ;
4. ຖືກເຈົ້າຂອງເຮືອປະຖິ້ມ ເກີນກວ່າ **03**ເດືອນ;

ໃນກໍລະນີຂໍ້ທີ 1, 2 ແລະ 3 ໃຫ້ເຈົ້າຂອງເຮືອ ຂຽນຄໍາຮ້ອງ ສະເໜີ ຂໍລຶບລ້າງທະບຽນເຮືອ ຕາມ ແບບພິມ ງ ຂອງ ກົມໂຍທາທິການທາງນໍ້າ ຍື່ນຕໍ່ອົງການຄຸ້ມຄອງທະບຽນເຮືອທີ່ກ່ຽວຂ້ອງ ຊຶ່ງອົງການ ດັ່ງກ່າວ ຈະລົງກວດກາສະພາບຕົວຈິງ, ຫາກເຫັນວ່າມີຄວາມຈິງ ຕາມເຈົ້າຂອງເຮືອ ໄດ້ສະເໜີມານັ້ນອົງການ ຄຸ້ມຄອງທະບຽນເຮືອ ກໍຈະອອກໃບລຶບລ້າງທະບຽນເຮືອຕາມ ແບບພິມ ງ1 ຂອງກົມໂຍທາທິການທາງນໍ້າ ອອກຈາກປື້ມບັນທຶກການຂຶ້ນທະບຽນເຮືອຂອງຕົນ ພ້ອມທັງລາຍງານ ຕໍ່ກົມໂຍທາທິການທາງນໍ້າ ເພື່ອລຶບ ລ້າງທະບຽນເຮືອລໍານັ້ນ ອອກຈາກປື້ມບັນທຶກທະບຽນເຮືອແຫ່ງຊາດ.

### ມາດຕາ 17 ການປ່ຽນແປງສ່ວນປະກອບຂອງເຮືອ.

ເຈົ້າຂອງເຮືອທີ່ມີຈຸດປະສົງຈະປັບປຸງ ແລະ ປ່ຽນແປງສ່ວນປະກອບທີ່ສໍາຄັນຂອງເຮືອ ຕ້ອງ ຂຽນໃບຄໍາຮ້ອງຕາມ ແບບພິມຈ ແລະ ປະກອບແບບ ທີ່ຈະປ່ຽນແປງສ່ວນປະກອບຕ່າງໆຂອງເຮືອ ສະເໜີຕໍ່ອົງການຄຸ້ມຄອງທະບຽນເຮືອ ບ່ອນທີ່ເຮືອລໍານັ້ນ ຂຶ້ນທະບຽນ. ພາຍຫລັງທີ່ໄດ້ອະນຸມັດ ໃຫ້ປ່ຽນແປງ ແລ້ວເຈົ້າຂອງເຮືອ ຈຶ່ງສາມາດດໍາເນີນການປັບປຸງຕາມທີ່ໄດ້ຮັບອະນຸຍາດນັ້ນ. ເມື່ອສໍາ ເລັດແລ້ວ ຕ້ອງນໍາເອົາເຮືອມາໃຫ້ເຈົ້າໜ້າທີ່ ຂອງອົງການດັ່ງກ່າວ ທໍາການກວດກາທາງດ້ານເຕັກນິກ. ຜ່ານການກວດກາແລ້ວຫາກເຫັນວ່າ ຖືກຕ້ອງຕາມມາດຕະຖານເຕັກນິກອົງການຄຸ້ມຄອງທະບຽນເຮືອ ຈຶ່ງຈົດເຂົ້າປື້ມບັນທຶກການຂຶ້ນທະບຽນເຮືອ ແລະ ອອກໃບທະບຽນໃໝ່ໃຫ້ ແລ້ວເກັບໃບທະບຽນ ເກົ່າຮັກສາໄວ້ໃນໄລຍະ 01 ປີ, ຫຼັງຈາກ ໝົດກໍານົດນີ້ແລ້ວ ກໍຈະທໍາລາຍຖິ້ມ.

### ມາດຕາ 18. ການຍົກຍ້າຍເຮືອ

ເຈົ້າຂອງເຮືອທີ່ມີຈຸດປະສົງຍົກຍ້າຍເຮືອທີ່ໄດ້ຂຶ້ນທະບຽນແລ້ວໄປຂຶ້ນທະບຽນຢູ່ບ່ອນອື່ນ ພາຍໃນ ຫຼື ຕ່າງປະເທດ ຕ້ອງຂຽນໃບຄໍາຮ້ອງຂໍຍົກຍ້າຍຕາມ ແບບພິມສ ຂອງ ກົມໂຍທາທິການທາງນໍ້າ ຂໍຍົກຍ້າຍເຮືອ ຕໍ່ອົງການຄຸ້ມຄອງທະບຽນເຮືອ ບ່ອນທີ່ເຮືອລໍານັ້ນ ຂຶ້ນທະບຽນ, ອົງການຄຸ້ມຄອງທະບຽນເຮືອດັ່ງກ່າວ ຈະອອກໃບອະນຸຍາດຍົກຍ້າຍ ພ້ອມທັງ ສໍາເນົາເອກະສານຕ່າງໆ ທີ່ກ່ຽວ ຂ້ອງກັບເຮືອລໍານັ້ນໃຫ້ເຈົ້າຂອງເຮືອ ເພື່ອນໍາເອົາໄປສະ ເໜີຕໍ່ອົງການຄຸ້ມຄອງທະບຽນເຮືອບ່ອນໃໝ່. ເມື່ອອົງການຄຸ້ມຄອງທະບຽນເຮືອບ່ອນໃໝ່ ໄດ້ຮັບ ເອກະສານຕ່າງໆແລ້ວ ຕ້ອງຈົດລາຍການເອກະສານນັ້ນ ເຂົ້າປື້ມບັນທຶກການຂຶ້ນທະບຽນເຮືອ ຂັ້ນຂອງຕົນ ແລ້ວອອກໃບທະບຽນເຮືອໃໝ່ໃຫ້ເຈົ້າຂອງເຮືອ ພ້ອມທັງເກັບ ໃບທະບຽນເກົ່າໄວ້.

## ໝວດທີ 3
## ສິດ ແລະ ໜ້າທີ່ ຂອງເຈົ້າຂອງເຮືອ

### ມາດຕາ 19. ສິດ ຂອງເຈົ້າຂອງເຮືອ.

ພາຍຫລັງທີ່ເຮືອໄດ້ຮັບການຂຶ້ນທະບຽນແລ້ວ ເຈົ້າຂອງເຮືອ ມີສິດຕົ້ນຕໍດັ່ງນີ້:

1. ຕັ້ງຊື່ເຮືອຂອງຕົນດ້ວຍຄຳສັບທີ່ເໝາະສົມ, ບໍ່ຂັດກັບລະບຽບກົດໝາຍ, ວັດທະນະທຳອັນດີງາມຂອງລາວ ແລະ ບໍ່ໃຫ້ກົງກັບຊື່ເຮືອລຳອື່ນທີ່ໄດ້ຂຶ້ນທະບຽນກ່ອນແລ້ວ ໂດຍໄດ້ຮັບການເຫັນດີ ແລະ ຮັບຮອງຂອງອົງການຄຸ້ມຄອງທະບຽນເຮືອຂັ້ນທີ່ກ່ຽວຂ້ອງ;
2. ສະເໜີຕໍ່ອົງການຄຸ້ມຄອງທະບຽນເຮືອຂັ້ນທີ່ກ່ຽວຂ້ອງ ໂດຍປະຕິບັດຕາມແບບພິມ ທີ່ກ່ຽວຂ້ອງ ຂອງກົມໂຍທາທິການທາງນ້ຳເພື່ອ:
   - ຂໍປ່ຽນຊື່ເຮືອ ເພື່ອໃສ່ຊື່ໃໝ່ ທີ່ເຫັນວ່າເໝາະສົມກວ່າຊື່ເກົ່າ;
   - ຂໍອະນຸຍາດປັບປຸງ ຫລື ປ່ຽນແປງສ່ວນປະກອບທີ່ສຳຄັນຂອງເຮືອ;
   - ສະເໜີຂໍປ່ຽນທະບຽນ ໃນກໍລະນີ ການຊື້-ຂາຍ, ການມອບໂອນກຳມະສິດ ຫລື ການມອບສິດນຳໃຊ້;
   - ສະເໜີຂໍປ່ຽນທະບຽນໃໝ່, ໃນກໍລະນີໃບທະບຽນຖືກເສຍຫາຍ,ຈີກຂາດ ຫລື ເປື້ອນເປິບໍ່ສາມາດນຳໃຊ້ໄດ້;
   - ສະເໜີຂໍຍົກຍ້າຍເຮືອໄປຂຶ້ນທະບຽນຢູ່ບ່ອນອື່ນ ຢູ່ພາຍໃນ ຫລື ຕ່າງປະເທດ.
3. ຄຸ້ມຄອງ ແລະ ນຳໃຊ້ເຮືອຂອງຕົນ ເຄື່ອນໄຫວກິດຈະການຕ່າງໆ ທີ່ໄດ້ຮັບອະນຸຍາດຕາມລະບຽບກົດໝາຍ.

## ມາດຕາ 20. **ໜ້າທີ່ ຂອງເຈົ້າຂອງເຮືອ.**

ພາຍຫລັງທີ່ເຮືອໄດ້ຮັບການຂຶ້ນທະບຽນແລ້ວ ເຈົ້າຂອງເຮືອມີໜ້າທີ່ຕົ້ນຕໍດັ່ງນີ້:

1. ແຕ້ມ ຫລື ຂຽນຊື່ເຮືອ, ເລກທະບຽນ, ລະດັບກິນນ້ຳເລິກ, ຂະໜາດບັນທຸກສິນຄ້າ ແລະ ຂະໜາດບັນຈຸຜູ້ໂດຍສານທີ່ໄດ້ຮັບອະນຸຍາດ;
2. ຮັກສາໃບທະບຽນເຮືອໄວ້ໃຫ້ຢູ່ໃນສະພາບດີ, ສາມາດນຳມາສະແດງ ໃຫ້ເຈົ້າໜ້າທີ່ງກ່ຽວຂ້ອງໄດ້ຢ່າງທັນການ ໃນເວລາມີການກວດກາ.ໃນກໍລະນີໃບທະບຽນເສຍຫາຍຕ້ອງແຈ້ງຕໍ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງເພື່ອລົງບັນທຶກໄວ້ ພ້ອມທັງເຮັດໃບແຈ້ງການເສຍຫາຍ ໃຫ້ເພື່ອນຳເອົາໄປສະເໜີຕໍ່ອົງການຄຸ້ມຄອງທະບຽນເຮືອ ຂັ້ນທີ່ກ່ຽວຂ້ອງ ພິຈາລະນາອອກໃບທະບຽນໃໝ່. ໃນກໍລະນີທີ່ໃບທະບຽນເປື້ອນເປິ ຫລື ຖືກຈີກຂາດ ຕ້ອງແຈ້ງຕໍ່ອົງການຄຸ້ມຄອງ ທະບຽນເຮືອຂັ້ນທີ່ກ່ຽວຂ້ອງໂດຍໄວ ເພື່ອສະເໜີຂໍການພິຈາລະນາອອກໃບທະບຽນໃໝ່;
3. ແຈ້ງໃຫ້ອົງການຄຸ້ມຄອງທະບຽນເຮືອ ຂັ້ນທີ່ກ່ຽວຂ້ອງ ຮັບຊາບຢ່າງທັນການ ຫລື ຢ່າງຊ້າບໍ່ໃຫ້ເກີນ 30ວັນ ໃນກໍລະນີທີ່ເຮືອສູນຫາຍ, ຫຼົ້ມຈົມ, ຖືກໄຟໄໝ້, ປະສົບອຸບັດຕິເຫດ ເປ່ເພເສຍຫາຍໜັກ, ໝົດສະພາບທີ່ຈະເຄື່ອນໄຫວໄດ້, ບໍ່ສາມາດກອບກູ້, ສ້ອມແປງ ຫລື ຟື້ນຟູຄືນໄດ້;
4. ສົ່ງໃບທະບຽນເຮືອຄືນໃຫ້ອົງການຄຸ້ມຄອງທະບຽນເຮືອຫາກໃບທະບຽນບໍ່ໄດ້ຖືກເສຍຫາຍ,ໃນກໍລະນີ ທີ່ເຮືອຕົກຢູ່ໃນສະພາບ ຕາມທີ່ໄດ້ກຳນົດໄວ້ ໃນຂໍ້ 3 ຢູ່ຂ້າງເທິງນີ້;
5. ແຈ້ງຢ່າງເປັນລາຍລັກອັກສອນ ໃຫ້ອົງການຄຸ້ມຄອງທະບຽນເຮືອ ຂັ້ນທີ່ກ່ຽວຂ້ອງຮັບຊາບໃນກໍລະນີທີ່ຈະຂາຍ ຫລືໂອນກຳມະສິດເຮືອຂອງຕົນໃຫ້ຜູ້ອື່ນ ເພື່ອສະເໜີຂໍການພິຈາລະນາປ່ຽນໃບທະບຽນເຮືອ ພາຍຫຼັງການຂາຍ ຫລື ການໂອນກຳມະສິດ.

## ໝວດທີ 4
## ການຄຸ້ມຄອງ ແລະ ການກວດກາ

**ມາດຕາ 21.** ອົງການຄຸ້ມຄອງທະບຽນເຮືອ ແລະ ການກວດກາວຽກງານຂຶ້ນທະບຽນເຮືອປະກອບດ້ວຍ:

- ກົມໂຍທາທິການທາງນໍ້າ;
- ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ;
- ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ.

**ມາດຕາ 22.** **ສິດ ແລະ ໜ້າທີ່ ຂອງກົມໂຍທາທິການທາງນໍ້າ**

ໃນການຈັດຕັ້ງປະຕິບັດວຽກງານຂຶ້ນທະບຽນເຮືອກົມໂຍທາທິການທາງນໍ້າມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄຸ້ມຄອງ, ກວດກາເຕັກນິກ, ຂຶ້ນທະບຽນເຮືອ ແລະ ລຶບລ້າງທະບຽນເຮືອ ປະເພດຕ່າງໆດັ່ງລຸ່ມນີ້:
   1.1 ເຮືອຂົນສົ່ງຜູ້ໂດຍສານ ແລະ ເຮືອຂົນສົ່ງສິນຄ້າລະຫວ່າງປະເທດທຸກຂະໜາດ;
   1.2 ເຮືອປະເພດຕ່າງໆພາຍໃນປະເທດ:
   - ເຮືອຂົນສົ່ງໂດຍສານ ແລະ ເຮືອທ່ອງທ່ຽວຂະໜາດບັນຈຸເກີນ **100** ບ່ອນນັ່ງ;
   - ເຮືອຂົນສົ່ງສິນຄ້າ ຂະໜາດບັນທຸກເກີນ **300** ໂຕນ;
   - ເຮືອແພຮ້ານອາຫານຂະໜາດບັນຈຸເກີນ **100** ຄົນ;
   - ເຮືອຂຸດຄົ້ນຂຸ້ມພະຍາກອນ ແລະ ເຮືອກໍ່ສ້າງຂະໜາດໃຫຍ່.
2. ກໍານົດຂະໜາດ ແລະ ມາດຕະຖານເຕັກນິກຂອງເຮືອຂຸດຄົ້ນຂຸ້ມພະຍາກອນ ແລະ ເຮືອກໍ່ສ້າງ;
3. ສັງລວມບັນຊີທະບຽນເຮືອໃນຂອບເຂດທົ່ວປະເທດເຂົ້າໃນປຶ້ມບັນທຶກທະບຽນເຮືອແຫ່ງຊາດ;
4. ເກັບ ແລະ ຄຸ້ມຄອງຄ່າທໍານຽມ ແລະ ຄ່າບໍລິການໆຂຶ້ນທະບຽນເຮືອ ຕາມລະບຽບກົດໝາຍ;
5. ຊີ້ນໍາ ແລະ ກວດກາການຈັດຕັ້ງປະຕິບັດການຄຸ້ມຄອງ, ການຂຶ້ນທະບຽນ ແລະ ການລຶບລ້າງທະບຽນເຮືອ ຂອງພະແນກ ໂຍທາທິການ ແລະ ຂົນສົ່ງແຂວງ, ນະຄອນຫລວງ ແລະ ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ ໃນຂອບເຂດທົ່ວປະເທດ;
6. ກໍານົດແບບພິມເອກະສານ ກ່ຽວກັບ ຄໍາຮ້ອງຕ່າງໆ ທີ່ພົວພັນກັບການຂຶ້ນທະບຽນເຮືອ, ການລຶບລ້າງ ທະບຽນ, ໃບທະບຽນເຮືອ ແລະເອກະສານອື່ນທີ່ກ່ຽວຂ້ອງ ພ້ອມທັງຈັດພິມ ແລະ ແຈກຢາຍໃຫ້ພະແນກໂຍທາທິການ ແລະຂົນສົ່ງແຂວງ, ນະຄອນຫຼວງ ແລະຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ ເພື່ອນໍາໃຊ້ ໂດຍສອດຄ່ອງຕາມຄວາມຮັບຜິດຊອບໃນຂັ້ນຂອງຕົນ;
7. ອອກບົດແນະນໍາເພີ່ມເຕີມ ກ່ຽວກັບ ການຄຸ້ມຄອງ, ຂຶ້ນທະບຽນ ແລະ ການລຶບລ້າງທະບຽນເຮືອ.

**ມາດຕາ 23.** **ສິດ ແລະ ໜ້າທີ່ ຂອງພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ນະຄອນຫລວງ.**

ໃນການຈັດຕັ້ງປະຕິບັດວຽກງານຂຶ້ນທະບຽນເຮືອພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

ຄຸ້ມຄອງ, ກວດກາເຕັກນິກ, ຂຶ້ນທະບຽນ ແລະ ລຶບລ້າງທະບຽນເຮືອ ປະເພດຕ່າງໆ ພາຍໃນແຂວງ ແລະ ລະຫວ່າງແຂວງດັ່ງລຸ່ມນີ້:

- ເຮືອຂົນສົ່ງໂດຍສານລວມທັງເຮືອທ່ອງທ່ຽວ ຂະໜາດບັນຈຸເກີນ **15** ບ່ອນນັ່ງຂຶ້ນໄປ ແຕ່ບໍ່ເກີນ **100** ບ່ອນນັ່ງ;

- ເຮືອຂົນສົ່ງສິນຄ້າຂະໜາດບັນຈຸເກີນ **15** ໂຕນ ຂຶ້ນໄປ ແຕ່ບໍ່ເກີນ **300** ໂຕນ;
- ເຮືອບັກລະຫວ່າງປະເທດ;
- ເຮືອບັກບັນທຸກລົດໃຫຍ່;
- ເຮືອແພຮ້ານອາຫານຂະໜາດບັນຈຸເກີນ **50** ຄົນຂຶ້ນໄປ ແຕ່ບໍ່ເກີນ **100**ຄົນ;
- ເຮືອຂຸດຄົ້ນຂຸດພະຍາກອນ ແລະ ເຮືອກໍ່ສ້າງຂະໜາດອື່ນ ນອກຈາກ ທີ່ໄດ້ກຳນົດໄວ້ຢູ່ ໃນຂໍ້ທີ1.2ຂອງມາດຕາ 22 ຂ້າງເທິງນີ້;
- ເຮືອກາບ ແລະ ເຮືອກິລາທີ່ແລ່ນດ້ວຍເຄື່ອງຈັກເກີນ **5** ແຮງມ້າ.

**ມາດຕາ 24. ສິດ ແລະ ໜ້າທີ່ຂອງຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ**

ໃນການຈັດຕັ້ງປະຕິບັດວຽກງານຂຶ້ນທະບຽນເຮືອ ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ ມີສິດ ແລະ ໜ້າທີ່ ຄຸ້ມຄອງ, ກວດກາເຕັກນິກ, ຂຶ້ນທະບຽນ ແລະ ລຶບລ້າງທະບຽນເຮືອປະເພດຕ່າງໆ ພາຍໃນເມືອງ ແລະ ລະຫວ່າງເມືອງ ດັ່ງລຸ່ມນີ້:

- ເຮືອຂົນສົ່ງໂດຍສານລວມທັງເຮືອທ່ອງທ່ຽວ ຂະໜາດບັນຈຸ **5** ບ່ອນນັ່ງຂຶ້ນໄປ ແຕ່ບໍ່ໃຫ້ເກີນ **15** ບ່ອນນັ່ງ;
- ເຮືອຂົນສົ່ງສິນຄ້າຂະໜາດບັນທຸກ **500** ກິໂລກຣາມ ຫລື **0.5** ໂຕນຂຶ້ນໄປ ແຕ່ບໍ່ເກີນ**15** ໂຕນ;
- ເຮືອບັກບັນທຸກລົດຈັກ;
- ເຮືອແພຮ້ານອາຫານ ຂະໜາດບັນຈຸ ບໍ່ເກີນ **50** ຄົນ;
- ເຮືອປະມົງ.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 25. ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ ຫລື ການຈັດຕັ້ງ ມີພຶດຕິກຳດັ່ງນີ້:

1. ບໍ່ແຈ້ງຂໍຂຶ້ນທະບຽນເຮືອ ທີ່ຕົນມີກຳມະສິດຄອບຄອງ;
2. ນຳເອົາເຮືອທີ່ບໍ່ໄດ້ຂຶ້ນທະບຽນໄປເຄື່ອນໄຫວໃນກິດຈະການຕ່າງໆ;
3. ມີພຶດຕິກຳ ອື່ນ ທີ່ລະເມີດລະບຽບກົດໝາຍ.

**ມາດຕາ 26. ຂໍ້ຫ້າມສຳລັບເຈົ້າຂອງເຮືອ**

ຫ້າມເຈົ້າຂອງເຮືອມີພຶດຕິກຳດັ່ງນີ້:

1. ນຳເອົາເຮືອທີ່ຂຶ້ນທະບຽນ ເປັນເຮືອໂດຍສານໄປຂົນສົ່ງສິນຄ້າ ຫລື ນຳເອົາເຮືອທີ່ຂຶ້ນທະບຽນ ເປັນເຮືອຂົນສົ່ງສິນຄ້າໄປຂົນສົ່ງຜູ້ໂດຍສານ ໂດຍບໍ່ໄດ້ຮັບອະນຸຍາດ;
2. ນຳເອົາເຮືອໄປຂຶ້ນທະບຽນຢູ່ຕ່າງປະເທດໂດຍບໍ່ໄດ້ຂໍລຶບລ້າງທະບຽນເດີມ ແລະບໍ່ປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງ;
3. ປັບປຸງ ຫລື ປ່ຽນແປງສ່ວນປະກອບທີ່ສຳຄັນຂອງເຮືອ ໂດຍບໍ່ໄດ້ຮັບອະນຸຍາດ;

4. ນຳໃຊ້ເຮືອ ເພື່ອດຳເນີນກິດຈະການທີ່ຜິດຕໍ່ລະບຽບກົດໝາຍ;
5. ມີພຶດຕິກຳ ອື່ນ ທີ່ລະເມີດຕໍ່ລະບຽບກົດໝາຍ.

**ມາດຕາ 27. ຂໍ້ຫ້າມສຳລັບເຈົ້າໜ້າທີ່ອົງການຄຸ້ມຄອງທະບຽນເຮືອ.**

ຫ້າມເຈົ້າໜ້າທີ່ອົງການຄຸ້ມຄອງທະບຽນເຮືອທຸກຂັ້ນມີພຶດຕິກຳດັ່ງນີ້:

1. ອະນຸຍາດໃຫ້ເຈົ້າຂອງເຮືອ ນຳເອົາເຮືອ ທີ່ຂຶ້ນທະບຽນເຮືອຢູ່ ສປປ ລາວ ໄປຂຶ້ນທະບຽນຢູ່ຕ່າງປະເທດໂດຍບໍ່ໄດ້ລຶບລ້າງທະບຽນເກົ່າ ແລະ ບໍ່ປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ;
2. ບໍ່ເອົາໃຈໃສ່ຕໍ່ວຽກງານຂຶ້ນທະບຽນເຮືອ, ປ່ອຍປະລະເລີຍໃຫ້ເຮືອປະເພດຕ່າງໆ ເຄື່ອນໄຫວໂດຍບໍ່ມີການຂຶ້ນທະບຽນ;
3. ມີພຶດຕິກຳອື່ນ ທີ່ລະເມີດລະບຽບກົດໝາຍ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 28. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງທີ່ໄດ້ປະກອບສ່ວນຊ່ວຍເຫລືອ ແລະ ໃຫ້ຄວາມຮ່ວມມືແກ່ເຈົ້າໜ້າທີ່ ອົງການຄຸ້ມຄອງທະບຽນເຮືອ ແລະ ເຈົ້າໜ້າທີ່ກ່ຽວຂ້ອງໃນການແກ້ໄຂບັນຫາຕ່າງໆ ກ່ຽວກັບທະບຽນເຮືອ ລວມທັງເຈົ້າຂອງເຮືອ ທີ່ໄດ້ປະຕິບັດຕາມລະບຽບການຂຶ້ນທະບຽນເຮືອ ສະບັບນີ້ເປັນຢ່າງດີ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມຄວາມເໝາະສົມ.

**ມາດຕາ 29. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ ແລະ ຕັກເຕືອນ, ປະຕິບັດວິໄນ, ປັບໃໝ ຫລື ຖືກດຳເນີນຄະດີຕາມກົດໝາຍແລ້ວແຕ່ກໍລະນີເບົາ ຫລື ໜັກ.

**ມາດຕາ 30. ມາດຕະການສຶກສາອົບຮົມ ແລະ ກ່າວເຕືອນ**

ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງທີ່ໄດ້ລະເມີດ ຂໍ້ຕົກລົງສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ທີ່ມີລັກສະນະເບົາບາງ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນເຊັ່ນ: ເຈົ້າຂອງເຮືອ ຫລື ຜູ້ໄດ້ຮັບມອບສິດ ບໍ່ສະເໜີຂໍຂຶ້ນທະບຽນ, ບໍ່ສະເໜີຂໍກວດກາເຕັກນິກເຮືອຂອງຕົນ ຕາມກຳນົດເວລາທີ່ກຳນົດໄວ້ໃນລະບຽບການສະບັບນີ້.

ພະນັກງານ ຫລື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງຂອງລັດ ທີ່ລະເລີຍຕໍ່ວຽກງານຄຸ້ມຄອງທະບຽນເຮືອ ກໍຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ ຫລື ອາດຖືກປະຕິບັດວິໄນ ຕາມແຕ່ລະກໍລະນີ.

**ມາດຕາ 31. ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງທີ່ໄດ້ລະເມີດ ຂໍ້ຕົກລົງສະບັບນີ້ຈະຖືກປັບໃໝດັ່ງນີ້:

1. ຈະຖືກປັບໃໝ ໜຶ່ງເທົ່າຂອງຄ່າທຳນຽມ ແລະ ຄ່າບໍລິການ ຂຶ້ນທະບຽນເຮືອ ທີ່ກຳນົດໄວ້ໃນລັດຖະບັນຍັດຂອງປະທານປະເທດ ແຫ່ງ ສປປ ລາວ ໃນແຕ່ລະໄລຍະ ຕາມກໍລະນີ ດັ່ງນີ້:
   - ນຳເອົາເຮືອທີ່ຍັງບໍ່ທັນໄດ້ຂຶ້ນທະບຽນ, ເຮືອທີ່ນຳເຂົ້າຈາກຕ່າງປະເທດ ແຕ່ຍັງບໍ່ທັນໄດ້ປ່ຽນ ຫລື ຂຶ້ນທະບຽນໃໝ່ໄປເຄື່ອນໄຫວໃນກິດຈະການຕ່າງໆ;
   - ຍົກຍ້າຍເຮືອຈາກ ແຂວງ, ເມືອງໜຶ່ງ ໄປປະຈຳຢູ່ແຂວງ, ເມືອງອື່ນ ໂດຍບໍ່ໄດ້ຮັບອະນຸຍາດແລະບໍ່ໄດ້ລຶບລ້າງທະບຽນເກົ່າຢ່າງຖືກຕ້ອງ ຈາກອົງການຄຸ້ມຄອງທະບຽນເດີມ;
   - ຍົກຍ້າຍເຮືອຈາກແຂວງ, ເມືອງໜຶ່ງໄປປະຈຳຢູ່ແຂວງ, ເມືອງອື່ນໂດຍໄດ້ຮັບອະນຸຍາດ ແລະ ໄດ້ລຶບລ້າງທະບຽນເກົ່າຢ່າງຖືກຕ້ອງແລ້ວ ແຕ່ບໍ່ໄປແຈ້ງຂຶ້ນທະບຽນນຳອົງການຄຸ້ມຄອງທະບຽນເຮືອ ບ່ອນທີ່ຍົກຍ້າຍເຮືອໄປນັ້ນ ພາຍໃນກຳນົດ 10 ວັນ;
2. ຈະຖືກປັບໃໝສອງເທົ່າຂອງຄ່າທຳນຽມ ແລະ ຄ່າບໍລິການ ກວດກາເຕັກນິກເຮືອ ທີ່ກຳນົດໄວ້ໃນລັດຖະບັນຍັດດັ່ງກ່າວຂ້າງເທິງນັ້ນໃນກໍລະນີບໍ່ນຳເອົາເຮືອ ໄປກວດກາເຕັກນິກປະຈຳປີຕໍ່ເຈົ້າໜ້າທີ່ ໂຍທາທິການ ແລະ ຂົນສົ່ງ ທີ່ກ່ຽວຂ້ອງ ເກີນກຳນົດ 30 ວັນ ແລະ ຈະຖືກປັບໃໝ 2 ເທົ່າ ຂອງຄ່າທຳນຽມ ແລະ ຄ່າບໍລິການ ກວດກາເຕັກນິກ ຕາມຈຳນວນປີທີ່ບໍ່ໄດ້ຮັບການກວດກາເຕັກນິກ;
3. ຈະຖືກປັບໃໝສອງເທົ່າຂອງຄ່າທຳນຽມ ແລະ ຄ່າບໍລິການຂຶ້ນທະບຽນເຮືອ ທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດດັ່ງກ່າວ ຢູ່ຂ້າງເທິງນັ້ນ ໃນກໍລະນີນຳໃຊ້ເຮືອ ທີ່ໄດ້ແຈ້ງຢຸດການນຳໃຊ້ຊົ່ວຄາວ ຫລື ຖາວອນແລ້ວ;
4. ຈະຖືກປັບໃໝໜຶ່ງສ່ວນຮ້ອຍ ຂອງມູນຄ່າ ຊື້-ຂາຍ ຫລື ມູນຄ່າຕົວຈິງຂອງເຮືອ ໃນກໍລະນີທີ່ທຳການຊື້-ຂາຍ ຫລື ມອບໂອນກຳມະສິດ ໂດຍບໍ່ໄດ້ແຈ້ງໃຫ້ອົງການຄຸ້ມຄອງທະບຽນເຮືອ ທີ່ກ່ຽວຂ້ອງຊາບເກີນກຳນົດ 30 ວັນ;
5. ຈະຖືກປັບໃໝໜຶ່ງເທົ່າ ຂອງມູນຄ່າດັດແປງ ຫລື ປ່ຽນແປງມາດຕະຖານເຕັກນິກເຮືອໂດຍບໍ່ໄດ້ຮັບອະນຸຍາດ ພ້ອມທັງໃຫ້ດັດແປງຄືນ ສູ່ສະພາບເຕັກນິກເດີມຕາມທີ່ໄດ້ຂຶ້ນທະບຽນໄວ້.

**ມາດຕາ 32. ມາດຕະການທາງອາຍາ**

ບຸກຄົນທີ່ໄດ້ລະເມີດ ຂໍ້ຕົກລົງສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາຈະຖືກດຳເນີນຄະດີຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາເຊັ່ນ:

- ການໃຫ້ສິນບົນແກ່ພະນັກງານ ຫລືເຈົ້າໜ້າທີ່ກ່ຽວຂ້ອງເພື່ອໃຫ້ໄດ້ທະບຽນເຮືອໂດຍບໍ່ຖືກຕ້ອງ;
- ການປອມແປງເອກະສານຕ່າງໆ ກ່ຽວກັບເຮືອ ເພື່ອໃຫ້ໄດ້ຂຶ້ນທະບຽນ;
- ການກະທຳອື່ນໆ ກ່ຽວກັບທະບຽນເຮືອ ທີ່ເປັນການກະທຳຜິດທາງອາຍາ.
- ພະນັກງານ, ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ທີ່ໄດ້ສວຍໃຊ້ໜ້າທີ່ຕຳແໜ່ງ ຫລື ຮັບສິນບົນກ່ຽວກັບ ການຂຶ້ນທະບຽນ, ການປ່ຽນທະບຽນເຮືອ ກໍຈະຖືກດຳເນີນຄະດີຕາມກົດໝາຍອາຍາ.

**ມາດຕາ 33. ມາດຕະການໂທດເພີ່ມ**

ນອກຈາກມາດຕະການທີ່ໄດ້ກຳນົດໄວ້ຢູ່ໃນ ມາດຕາ 29, 30, 31 ແລະ 32 ຂອງຂໍ້ຕົກລົງສະບັບນີ້ ຜູ້ລະເມີດອາດຈະຖືກປະຕິບັດມາດຕະການໂທດເພີ່ມອີກເຊັ່ນ: ຖືກຍຶດໃບທະບຽນ, ລົບລ້າງທະບຽນ ຫລື ຖືກຍຶດເຮືອ ຕາມແຕ່ລະກໍລະນີ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 34. ການຈັດຕັ້ງປະຕິບັດ**

ກົມໂຍທາທິການທາງນ້ຳ, ພະແນກໂຍທາທິການ ແລະ ຂົນສົ່ງແຂວງ ແລະ ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ ມີໜ້າທີ່ ຈັດຕັ້ງປະຕິບັດຂໍ້ຕົກລົງ ສະບັບນີ້ຢ່າງເຂັ້ມງວດ.

ມອບໃຫ້ກົມໂຍທາທິການທາງນ້ຳ ເຜີຍແຜ່ຂໍ້ຕົກລົງສະບັບນີ້ ພ້ອມທັງອອກບົດແນະນຳເພີ່ມເຕີມທີ່ຈຳເປັນຢ່າງລະອຽດ ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດໄດ້ຮັບຜົນດີ.

**ມາດຕາ 35. ຜົນບັງຄັບໃຊ້**

ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປບັນດາຂໍ້ຕົກລົງ, ຂໍ້ກຳນົດ ຫລື ລະບຽບການໃດທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ວນແຕ່ຖືກຍົກເລີກ.

ລັດຖະມົນຕີວ່າການ

ສົມມາດ ພົລເສນາ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ

ກົມໂຍທາທິການທາງນ້ຳ

ເລກທີ 17069 /ຍທຂ.ກຍນ

ນະຄອນຫຼວງ ວຽງຈັນ, ວັນທີ 5/12/2013

# ບົດແນະນຳ
# ກ່ຽວກັບການຂຶ້ນທະບຽນເຮືອ

- ອີງຕາມ ຂໍ້ຕົກລົງ ຂອງ ລັດຖະມົນຕີວ່າການ ກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 14262/ຍທຂ, ລົງວັນທີ 13 ພະຈິກ 2008 ວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກົມໂຍທາທິການທາງນ້ຳ;
- ອີງຕາມ ຂໍ້ຕົກລົງ ຂອງ ລັດຖະມົນຕີວ່າການ ກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 00177/ຍທຂ, ລົງວັນທີ 4 ມັງກອນ 2013 ວ່າດ້ວຍລະບຽບການ ກ່ຽວກັບການຂຶ້ນທະບຽນເຮືອ.

ເພື່ອຄວາມເປັນເອກະພາບ ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງເຮືອ ແລະ ການຂຶ້ນທະບຽນເຮືອ ໃນຂອບເຂດທົ່ວປະເທດ ທັງເປັນການອຳນວຍຄວາມສະດວກ ແລະ ຮັບປະກັນ ໃຫ້ການນຳໃຊ້ເຮືອຖືກຕ້ອງ ຕາມລະບຽບການ ແລະ ກົດໝາຍ ທີ່ກ່ຽວຂ້ອງ ຂອງ ສປປ ລາວ.

## ກົມໂຍທາທິການທາງນ້ຳ ອອກ ບົດແນະນຳ:

1) **ໃບຄຳຮ້ອງຂໍຂຶ້ນທະບຽນເຮືອ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃຫ້ປະກອບໃບຄຳຮ້ອງ ຂໍຂຶ້ນທະບຽນເຮືອ ຕາມແບບພິມ ຂອງ ກົມໂຍທາທິການທາງນ້ຳ ດັ່ງນີ້ :

- ແບບພິມ ກ ສຳລັບເຮືອຂຶ້ນທະບຽນ ຄັ້ງທຳອິດ;
- ແບບພິມ ກ2 ສຳລັບເຮືອທີ່ໃຊ້ແລ້ວ, ຂຶ້ນທະບຽນ ຄັ້ງທຳອິດ;
- ແບບພິມ ຈ ສຳລັບເຮືອທີ່ປ່ຽນແປງສ່ວນປະກອບ ຂອງເຮືອ;
- ແບບພິມ ສ ສຳລັບເຮືອທີ່ ຍົກຍ້າຍ/ປ່ຽນຫ້ອງການຂຶ້ນທະບຽນ;
- ແບບພິມ ຍ ສຳລັບທະບຽນເສຍຫາຍ ;
- ແບບພິມ ຊ ສຳລັບເຮືອທີ່ປ່ຽນກຳມະສິດ.

2) ໃບຢັ້ງຢືນການກວດກາເຕັກນິກເຮືອ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ອນຈະນຳເຮືອຂອງຕົນ ໄປຂຶ້ນທະບຽນ ຕ້ອງໄດ້ຜ່ານການກວດກາເຕັກນິກເສຍກ່ອນ ໂດຍຂຽນຄຳຮ້ອງ ຕາມແບບພິມ ກຮ-1 ຂອງກົມໂຍທາ ທິການທາງນ້ຳ ແລ້ວຍື່ນຕໍ່ ກົມໂຍທາທິການທາງນ້ຳ ຫລື ພະແນກໂຍທາທິການ ແລະ ຂົນສົ່ງ ຂັ້ນແຂວງ ຫລື ຫ້ອງການໂຍທາທິການ ແລະ ຂົນສົ່ງ ຂັ້ນເມືອງ ບ່ອນທີ່ຈະນຳເຮືອໄປຂຶ້ນທະບຽນ. ໃຫ້ເຈົ້າໜ້າທີ່, ພະນັກງານທີ່ກ່ຽວຂ້ອງ ກວດກາເຕັກນິກເຮືອ ຕາມຂໍ້ແນະນຳ ກ່ຽວກັບ ການກວດກາເຕັກນິກເຮືອ ສະບັບເລກທີ່ 0052/ກຂສ, ລົງວັນທີ 8/1/1996 ແລະ ອອກໃບຢັ້ງຢືນການກວດກາເຕັກນິກ ຕາມແບບພິມ ກຮ-2 ຂອງກົມໂຍທາທິການທາງນ້ຳ.

3) ເອກະສານຢັ້ງຢືນຄວາມປອດໄພດ້ານເຕັກນິກ ແລະ ສິ່ງແວດລ້ອມຂອງເຮືອ

ເອກະສານ ໃບຢັ້ງຢືນຄວາມປອດໄພ ດ້ານເຕັກນິກ ແລະ ສິ່ງແວດລ້ອມຂອງເຮືອ ອອກໃຫ້ ໂດຍກົມໂຍທາທິການທາງນ້ຳ ຫລື ພະແນກໂຍທາທິການ ແລະ ຂົນສົ່ງ ຂັ້ນແຂວງ ຫລື ຫ້ອງການໂຍທາທິການ ແລະ ຂົນສົ່ງ ຂັ້ນເມືອງ ໂດຍອີງຕາມລະບຽບ ວ່າດ້ວຍ ການກວດກາ ເຕັກນິກເຮືອ ມີດັ່ງນີ້ :

- ໃບຢັ້ງຢືນ ຕົວເຮືອໂດຍສານ ຫຼື ສິນຄ້າ;
- ໃບຢັ້ງຢືນ ເຄື່ອງມື, ອຸປະກອນ, ເຄື່ອງໃຊ້ ໃນເຮືອ ລວມທັງເສື້ອຊູຊີບ, ອຸປະກອນມອດໄຟ;
- ໃບຢັ້ງຢືນ ຂະໜາດບັນທຸກ ແລະ ໃບຢັ້ງຢືນເສັ້ນນ້ຳໜັກບັນທຸກ ;
- ໃບຢັ້ງຢືນ ຂະໜາດບັນທຸກ ສິນຄ້າ ຫຼື ຄົນໂດຍສານ;
- ໃບຢັ້ງຢືນ ຈຳນວນລູກເຮືອ;
- ໃບຢັ້ງຢືນການປ້ອງກັນ ມົນລະພາວະ ຈາກນ້ຳມັນ.
- ໃບຢັ້ງຢືນ ວິທະຍຸສື່ສານ ຂອງເຮືອ;

4) ການຍົກຍ້າຍເຮືອ

ການຍົກຍ້າຍບ່ອນຂຶ້ນທະບຽນເຮືອ ຫຼື ປ່ຽນຫ້ອງການຂຶ້ນທະບຽນເຮືອ ໃຫ້ ກົມໂຍທາທິການທາງນ້ຳ ຫລື ພະແນກໂຍທາທິການ ແລະ ຂົນສົ່ງ ຂັ້ນແຂວງ ຫລື ຫ້ອງການໂຍທາທິການ ແລະ ຂົນສົ່ງ ຂັ້ນເມືອງ ບ່ອນທີ່ຂຶ້ນທະບຽນເຮືອເດີມ ປະຕິບັດ ດັ່ງນີ້ :

- ເກັບໃບທະບຽນເຮືອທີ່ໄດ້ອອກໃຫ້ນັ້ນຄືນ ພ້ອມທັງເຈາະຮູ ແລະ ລຶບຊື່ເຮືອໃນປື້ມບັນທຶກການຂຶ້ນທະບຽນເຮືອຂອງຕົນ ;
- ອອກໃບລຶບລ້າງທະບຽນເຮືອ ຕາມແບບພິມ ງ1 ຂອງກົມໂຍທາທິການທາງນ້ຳ;
- ປະທັບຕາຢັ້ງຢືນລຶບລ້າງ ໃສ່ເອກະສານຂຶ້ນທະບຽນເຮືອ ພ້ອມທັງມອບເອກະສານດັ່ງກ່າວ ຄືນໃຫ້ແກ່ເຈົ້າຂອງເຮືອ ເພື່ອນຳໄປສະເໜີ ຂໍຂຶ້ນທະບຽນຢູ່ບ່ອນອື່ນ.

5) ການຂຽນ ຊື່ເຮືອ, ເລກທະບຽນເຮືອ, ລະດັບກິນນ້ຳເລິກ, ຂະໜາດບັນທຸກສິນຄ້າ ຫຼື ຂະໜາດບັນຈຸຜູ້ໂດຍສານທີ່ໄດ້ຮັບອະນຸຍາດ ໃສ່ເຮືອ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຂໍຂຶ້ນທະບຽນເຮືອ ເປັນຜູ້ຂຽນ ເລກທະບຽນເຮືອ, ລະດັບກິນນ້ຳເລິກ, ຂະໜາດບັນທຸກສິນຄ້າ ຫຼື ຂະໜາດບັນຈຸຜູ້ໂດຍສານ ໃສ່ເຮືອຂອງຕົນ ທີ່ມາຂຶ້ນທະບຽນ ໂດຍພາຍໃຕ້ການຕິດຕາມກວດກາຂອງພະນັກງານ, ເຈົ້າໜ້າທີ່ ທີ່ກ່ຽວຂ້ອງຂອງ ກົມໂຍທາທິການທາງນ້ຳ ຫລື ພະແນກໂຍທາທິການ ແລະ ຂົນສົ່ງ ຂັ້ນແຂວງ ຫລື ຫ້ອງການໂຍທາທິການ ແລະ ຂົນສົ່ງ ຂັ້ນເມືອງ ບ່ອນທີ່ຂຶ້ນທະບຽນເຮືອນັ້ນ.

ຊື່ເຮືອ ໃຫ້ຂຽນໃສ່ຫົວເຮືອດ້ານນອກ ທັງສອງຂ້າງ ບ່ອນທີ່ເຫັນໄດ້ຢ່າງຊັດເຈນ ແລະ ດ້ານທ້າຍເຮືອໃຫ້ຂຽນ ຊື່ແຂວງໃສ່. ສຳລັບເຮືອຂະໜາດນ້ອຍ ທີ່ມີຫຼັງຄາຍາວຕະຫຼອດລຳ ແລະ ມີຫ້ອງຂັບ ຢູ່ດ້ານຫົວເຮືອ ຊຶ່ງບໍ່ສາມາດ ຈະຂຽນຊື່ເຮືອໃສ່ໄດ້ ແມ່ນໃຫ້ຂຽນໃສ່ຝາດ້ານນອກທັງສອງເບື້ອງ ຂອງຫ້ອງຂັບ ຖ້າບໍລິເວນດັ່ງກ່າວ ຫາກເປັນລູກຕົ່ງ ຫຼື ແກ້ວ ກໍສາມາດຂຽນໃສ່ແຜ່ນເຫຼັກ ຫຼື ກະດານໄມ້ ແລ້ວນຳມາຕິດໃສ່ບໍລິເວນນັ້ນ.

ຕົວອັກສອນຊື່ເຮືອ ຕ້ອງເຮັດເປັນຕົວອັກສອນລາວ, ສ່ວນເຮືອທີ່ແລ່ນສາຍຕ່າງປະເທດ ໃຫ້ຂຽນມີທັງຕົວອັກສອນລາວ ແລະ ອັກສອນອັງກິດ ຕົວພິມໃຫຍ່ ໂດຍຂະໜາດຂອງຕົວອັກສອນລາວ ຕ້ອງໃຫຍ່ກວ່າຕົວອັກສອນອັງກິດ. ສີ ແລະ ຂະໜາດຂອງຕົວອັກສອນ ໃຫ້ປະຕິບັດຕາມຂໍ້ຕົກລົງວ່າດ້ວຍລະບຽບການກ່ຽວກັບການຂຶ້ນທະບຽນເຮືອ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ.

ຕົວຢ່າງ :







6) ເຄື່ອງໝາຍລະດັບກິນນ້ຳເລິກ

ເຮືອທຸກລຳ ທີ່ມີລະດັບກິນນ້ຳເລິກ ແຕ່ 1.00 ແມັດ ຂຶ້ນໄປ ຕ້ອງມີເຄື່ອງໝາຍລະດັບ ກິນນ້ຳເລິກ.

ເຄື່ອງໝາຍ ລະດັບກິນນໍ້າເລິກ ໃຫ້ຂຽນໄວ້ ທີ່ດ້ານນອກຂອງເຮືອ ທັງສອງຂ້າງ ທີ່ຫົວເຮືອ, ກາງລໍາເຮືອ, ແລະ ທ້າຍເຮືອ ດ້ວຍຕົວເລກສາກົນ, ການຂຽນເຄື່ອງໝາຍ ໃຫ້ຂຽນເປັນຫົວໜ່ວຍຊັງຕີແມັດ ຊຶ່ງມີໄລຍະຫ່າງ 20 ຊັງຕີແມັດ ໂດຍເລີ່ມຈາກຈຸດຕໍ່າສຸດ ຂອງແຜ່ນທ້ອງເຮືອ ຫຼື ກະດູກງູຂຶ້ນມາ ຕາມລວງຕັ້ງ ຊຶ່ງມີຂະໜາດຂອງເສັ້ນ ແລະ ຕົວເລກ ດັ່ງນີ້ :




7) ຄ່າທໍານຽມ ແລະ ຄ່າບໍລິການ

ຄ່າທໍານຽມ ແລະ ຄ່າບໍລິການ ສໍາລັບ ການຂຶ້ນທະບຽນເຮືອ ແມ່ນໃຫ້ປະຕິບັດ ຕາມລັດຖະບັນຍັດຂອງ ປະທານປະເທດເລກທີ່ 03/ປປທ ລົງວັນທີ 19 ພະຈິກ 2008 ຊຶ່ງລະບຸໄວ້ ດັ່ງນີ້:

- ການເກັບຄ່າບໍລິການຂຶ້ນທະບຽນເຮືອທຸກປະເພດ ທຸກຊະນິດໃຫ້ເກັບ **20,000** ກີບ ຕໍ່ຄັ້ງ ຕໍ່ລໍາ ຕາມໝວດ IV, ມາດຕາ 66, ຂໍ້ 2.2.3.
- ການເກັບຄ່າທໍານຽມ ແມ່ນໃຫ້ປະຕິບັດ ຕາມໝວດ IV, ມາດຕາ 14, ຂໍ້ 3.1 ຊຶ່ງລະບຸໃນຕາຕະລາງ ດັ່ງນີ້:

| ລ/ດ | ເນື້ອໃນ | ກີບ/ຄັ້ງ |
|---|---|---|
| 01 | ເຮືອບັນທຸກສິນຄ້າຂະໜາດບັນທຸກ ແຕ່ 1 ເຖິງ 15 ໂຕນ | 50,000 |
| 02 | ເຮືອບັນທຸກຂະໜາດບັນທຸກແຕ່ 16 ເຖິງ 50 ໂຕນ | 100,000 |
| 03 | ເຮືອບັນທຸກຂະໜາດບັນທຸກແຕ່ 51 ເຖິງ 100 ໂຕນ | 150,000 |
| 04 | ເຮືອບັນທຸກຂະໜາດບັນທຸກແຕ່ 101 ໂຕນ ຂຶ້ນໄປ | 200,000 |
| 05 | ເຮືອຫາງຍາວ | 20,000 |
| 06 | ເຮືອໄວ | 200,000 |
| 07 | ເຮືອໂດຍສານຂະໜາດບັນທຸກແຕ່ 5-15 ບ່ອນນັ່ງ | 50,000 |
| 08 | ເຮືອໂດຍສານຂະໜາດບັນທຸກແຕ່ 16-50 ບ່ອນນັ່ງ | 100,000 |

| | | |
|---|---|---|
| 09 | ເຮືອໂດຍສານຂະໜາດບັນທຸກແຕ່ 51-100 ບ່ອນນັ່ງ | 150,000 |
| 10 | ເຮືອໂດຍສານຂະໜາດບັນທຸກແຕ່ 101 ບ່ອນນັ່ງ ຂຶ້ນໄປ | 200,000 |
| 11 | ເຮືອບັກພາຍໃນປະເທດ | 150,000 |
| 12 | ເຮືອບັກລະຫວ່າງປະເທດ | 200,000 |
| 13 | ແພລອຍ ແລະ ສະຫລາງ | 100,000 |
| 14 | ເຮືອຍູ້,ເຮືອລາກ ແລະ ເຮືອວິສະວະກຳ | 100,000 |

8). ຜົນສັກສິດ

ບົດແນະນຳ ສະບັບນີ້ ມີຜົນສັກສິດພາຍຫຼັງ ສາມສິບວັນ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ຫົວໜ້າກົມ,

ຮຸ່ງຫຼ້າ ແສງເມືອງ